GCI

# ບົດທີ 6
# ຊີວິດ ແລະຄຳສອນຂອງພະເຢຊູຄຣິດ

**ອາລຳພະບົດ:**

ຈຸດປະສົງຂອງບົດຮຽນ:

- ເພື່ອສຶກສາພາບລວມຂອງຊີວິດຂອງພະເຢຊູຄຣິດ
- ເພື່ອຄົ້ນຄວ້າເບິ່ງເອກກະລັກພິເສດໃນຊີວິດຂອງພະເຢຊູ
- ເພື່ອສຶກສາເຖິງແຮງບັນດານໃຈໃນການເຮັດພັນທະກິດຂອງພະອົງ
- ເພື່ອຮັບການດົນໃຈໃຫ້ດຳເນີນຊີວິດເໝືອພະຄຣິດ

**ໂຄງຮ່າງບົດຮຽນ:**

1. ອາລຳພະບົດ
2. ພະເຢຊູຊົງມີເອກກະລັກພິເສດ ໃນການດຳເນີດຈາກຍິງພົມມະຈາລີ
3. ຊີວິດຊ່ວງທຳອິດ
4. ການບັບຕິສະມາ
5. ການທົດລອງໃນຖິ່ນທຸລະກັນດານ
6. ພະຣາຊະກິດໃນຊ່ວງທຳອິດ
7. ຄວາມເປັນພະເຈົ້າຂອງພະເຢຊູຄຣິດ
8. ຊີວິດແລະຄຳສອນທີ່ບໍລິສຸດ
9. ພະອົງດຳເນີນຊີວິດ ແລະຕອນຊີວິດແຫ່ງການອະທິຖານ
10. ຊີວິດທີ່ມີຄຸນລັກສະພິເສດໃນຖານະພະບຸດຂອງພະເຈົ້າ
11. ພະອົງດຳເນີນຊີວິດໃນຄວາມສຳພັນກັບພະວິນຍານບໍລິສຸດ
12. ພະອົງດຳເນີນຊີວິດທີ່ເຕັມໄປດ້ວຍການເຮັດການອັດສະຈັນ
13. ພະອົງດຳເນີນຊີວິດຢ່າງຜູ້ຮັບໃຊ້
14. ພະອົງດຳເນີນຊີວິດໃນຄວາມຮັກ-ຄວາມໃສ່ໃຈ ຄວາມເມດຕາ ແລະຄວາມຫ່ວງໄຍ
15. ການຮັກສາຄົນເຈັບປ່ວຍ
16. ຊີວິດທີ່ເຕັມໄປດ້ວຍການທົນທຸກ ແລະຄວາມຍາກລຳບາກ ດຳເນີນຊີວິດຢ່າງກະສັດທີ່ຄົນບໍ່ຍອມຮັບ
17. ຊີວິດທີ່ມີຄຸນລັກສະນະພິເສດໃນຖານະພະຜູ້ຊ່ວຍໃຫ້ພົ້ນ
18. ການສິ້ນພະຊົນຊຶ່ງມີລັກສະນະພິເສດ
19. ການຄືນພະຊົນຊຶ່ງມີລັກສະນະພິເສດ

20. ຊີວິດທີ່ເຮັດໃຫ້ຄໍາພະຍາກອນສໍາເລັດເປັນຈິງ

21. ຊີວິດ ແລະພະຣາຊະກິດເທິງໂລກຍັງບໍ່ສໍາເລັດສິ້ນ - ພະອົງຈະສະເດັດກັບມາອີກ

22. ບົດສະຫລຸບ

GCI

# I. ບົດນຳ

ຄວາມເປັນຄຣິສຕຽນນັ້ນ ແຕກຕ່າງຈາກສາດສະໜາອື່ນໆ ເພາະມັນບໍ່ແມ່ນສາດສະໜາ ແຕ່ເປັນເລື່ອງຂອງຊີວິດແຫ່ງ ພະບຸດຂອງພະເຈົ້າ ຊຶ່ງດຳລົງຢູ່ໃນບັນດາຜູ້ເຊື່ອ.

ພະເຢຊູຊົງເປັນຜູ້ທີ່ມີຄຸນລັກສະນະເປັນເອກກະລັກ **ພິເສດ** ແຕກຕ່າງຈາກຄົນອື່ນໃດທັງສິ້ນທີ່ເຄີຍ ມີຊີວິດຢູ່ໃນໂລກນີ້.

ເອກກະລັກພິເສດໝາຍເຖິງ: ເປັນເອກ ເປັນນຶ່ງດຽວ, ແຕກຕ່າງຈາກຜູ້ອື່ນທັງສິ້ນ.

ບົດຮຽນນີ້ຈະຊີ້ໃຫ້ເຮົາເຫັນເຖິງເອກະລັກພິເສດໃນຊີວິດ ແລະຄຳສອນຂອງພະອົງ.

ຊີວິດຂອງພະອົງເປັນຊີວິດທີ່ມີ **<u>ເປົ້າໝາຍ</u>** ແລະ **<u>ພັນທະກິດ</u>** ພະອົງຊົງຮູ້ວ່າ ພະອົງເອງມາຈາກບ່ອນໃດຈະເຮັດອັນໃດ ແລະຈະໄປບ່ອນໃດ ພະອົງຊົງທຸ້ມເທຊີວິດຈິດໃຈເພື່ອຈະເຮັດໃຫ້ພະຣາຊະກິດທີ່ພະບິດາຊົງໃຊ້ໃຫ້ເຮັດນັ້ນໄດ້ສຳເລັດ.

**1ໂຢຮັນ 4:14** "ພະບິດາໄດ້ຊົງສົ່ງພະບຸດເຂົ້າມາໃນໂລກເພື່ອເປັນພະຜູ້ຊ່ວຍໃຫ້ພົ້ນຂອງໂລກ"

ພະຣາຊະກິດຂອງພະອົງເລີ້ມຕົ້ນໃນສະຫວັນເມື່ອພະເຈົ້າຊົງເຮັດໃຫ້

**ໂຢຮັນ**1:3"ທຸກສິ່ງເປັນມາໂດຍທາງພະອົງ"
**ຟີລິບບອຍ 2:6-7** "ຜູ້ຊົງສະພາບຂອງພະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າ ການເທົ່າທຽມກັບພະເຈົ້ານັ້ນເປັນສິ່ງທີ່ຈະຕ້ອງຍຶດຖື ແຕ່ໄດ້ຊົງສະຫລະ ແລະຊົງຮັບສະພາບທາດຊົງຖືກຳເນີດເປັນມະນຸດ ແລະເມື່ອຊົງປາກົດພະອົງໃນສະພາບມະນຸດແລ້ວ ພະອົງກໍຊົງຖ່ອມພະອົງລົງຍອມເຊື່ອຟັງ.."

# II. ພະເຢຊູຊົງມີເອກະລັກພິເສດໃນການກຳເນີດຈາກຍິງພົມມະຈາລີ

ກ. ປະຕິສົນທິໂດຍພະວິນຍານບໍລິສຸດ

**ມັດທາຍ**1:18-25:"..ເພາະວ່າ ຜູ້ຊຶ່ງປະຕິສົນທິໃນຄັນຂອງນາງເປັນໂດຍເດດພະວິນຍານບໍລິສຸດ"

**ລູກາ 1:26-35** "..ເຫດສະນັ້ນລູກທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າ ບໍລິສຸດ ແລະເອີ້ນວ່າ ພະບຸດຂອງພະເຈົ້າ"

GCI

ການທີ່ພະອົງບັງເກີດຈາກຍິງພົມມະຈາລີ ເຮັດໃຫ້ພະອົງບໍ່ຄືໃຜເລີຍ ໃນປະຫວັດສາດຂອງມະນຸດຊາດໂດຍການເກີດຈາກຍິງພົມມະຈາລີນີ້ເອງ ເຮັດໃຫ້ພະເຈົ້າມາຮັບສະພາບເປັນມະນຸດ ແລະ ເປັນຜູ້ດຽວທີ່ຄົບຖ້ວນສົມບູນ ເອກກະພາບຂອງທຳມະຊາດທັງສອງໄດ້ເຮັດໃຫ້ພະເຢຊູຊົງເປັນພະເຈົ້າແທ້ ແລະມະນຸດແທ້ ພະເຢຊູຄຣິດຊົງເປັນທັງພະບຸດຂອງພະເຈົ້າ ແລະບຸດມະນຸດ

ຂ. ມີເອກະລັກພິເສດໃນການເຮັດໃຫ້ຄຳພະຍາກອນສຳເລັດ

**ປະຖົມມະການ 3:15 :** "..ພົງພັນຂອງຍິງ" ໝາຍເຖິງບໍ່ໄດ້ມີມະນຸດເປັນພໍ່
**ເອຊາຢາ 7:14** :"ເບິ່ງເຖີດຍິງພົມມະຈາລີຄົນນຶ່ງຈະຕັ້ງຄັນ ແລະເກີດລູກຊາຍຄົນນຶ່ງ ແລະ ເຂົາຈະເອີ້ນນາມຂອງທ່ານວ່າ ອິມມານູເອລ"
**ເອຊາຢາ 9:6-7:** "ດ້ວຍມີເດັກຄົນນຶ່ງເກີດມາເພື່ອເຮົາ ມີລູກຊາຍຄົນນຶ່ງປະທານມາໃຫ້ເຮົາ"
**ມີຄາ 5:2** : ພະອົງຈະຊົງບັງເກີດທີ່ບ້ານເບດເລເຮັມ

## III. ຊີວິດໄລຍະທຳອິດ

ກ. ດຳລົງຊີວິດແບບເດັກນ້ອຍທຳມະດາທົ່ວໄປ

1. ລູກາ2:41-52 ເມື່ອອາຍຸໄດ້ສິບສອງປີພະອົງສຳແດງໃຫ້ເຫັນວ່າພະອົງຊົງຮູ້ຈັກພະບິດາໃນສະຫວັນ

2. ທຳມະຊາດຄວາມເປັນມະນຸດຂອງພະອົງປາກົດໃຫ້ເຫັນໃນດ້ານຕ່າງໆ ຄື

ກ) ພະອົງຊົງ**<u>ຫິວ</u>** **ມັດທາຍ 4:2**
ຂ) ພະອົງຊົງ**<u>ກະຫາຍນ້ຳ</u>** **ໂຢຮັນ 29:28**
ຄ) ພະອົງຊົງ**<u>ອິດເມື່ອຍ</u>** **ໂຢຮັນ 4:6**
ງ) ພະອົງຮ້ອງ**<u>ໄຫ້</u>** **ໂຢຮັນ 11:35**
ຈ) ພະອົງຖືກ**<u>ທົດລອງ</u>** **ເຮັບເຣີ 4:15**

ຂ. ປະຫວັດສາດຢືນຢັນວ່າ ພະອົງຊົງເປັນມະນຸດ

1. ແມ່ນແຕ່ນັກປະຫວັດສາດທີ່ບໍ່ເຊື່ອໃນພະເຈົ້າ ຕ່າງກໍຢືນຢັນໂດຍບໍ່ມີຂໍ້ສົງໄສວ່າ ພະເຢຊູເຄີຍດຳເນີນຊີວິດຢູ່ເທິງໂລກນີ້ ແລະມີຜູ້ຄົນນະມັດສະການພະອົງເປັນພະເຈົ້າ

GCI

2. ໜັງສື *ເອັນໄຊຄະໂລພີເດັຍ ບະຣິເຕນິກກາ* ໄດ້ໃຊ້ເນື້ອທີ່ໃນການບັນລະຍາຍເຖິງພະເຢຊູ ມີຫລາຍກວ່າທີ່ ອະຣິສໂຕເຕີລ, ອະເລັກຊານເດີ,ຈູເລັຽ ຊີຊາ, ພະພຸດທະເຈົ້າ, ໂມຮາເມັດ, ຂົງຈື້, ຫລື ນະໂປລຽນ ໂບນາປາຕ

# IV. ການບັບຕິສະມາຂອງພະອົງ

**ມັດທາຍ** 3:13-17 ພະວິນຍານບໍລິສຸດໄດ້ສະເດັດມາເທິງພະອົງ ແລະມີສຽງດັງກ່າວມາຈາກສະຫວັນ

# V. ການທົດລອງໃນຖິ່ນທຸລະກັນດານ

**ມັດທາຍ4:1-11** ອາດານຄືນທຳອິດ ແລະມະນຸດທຸກຄົນຕ່າງກໍຫລົ້ມເຫລວ ແຕ່ອາດານຄົນສຸດທ້າຍຊົງມີໄຊຊະນະເໜືອການທົດລອງ

# VI. ພະລາຊະກິດໃນໄລຍະທຳອິດ

**ມັດທາຍ 4:12-17; 23-25** ຄາລີເລແຫ່ງຄົນຕ່າງຊາດ
**ມັດທາຍ 4:16-22** ສາວົກກຸ່ມທຳອິດຂອງພະອົງ

# VII. ຄວາມເປັນພະເຈົ້າຂອງພະເຢຊູຄຣິດ

ພະອົງຊົງມີເອກະລັກເພາະບໍ່ມີຜູ້ນຳສາສະໜາຄົນອື່ນໃດບໍ່ວ່າ ພະພຸດທະເຈົ້າ, ມູຫະມັດ, ຫລື ດາໄລລະມະ ເຄີຍກ່າວອ້າງວ່າ ຕົນເປັນພະເຈົ້າ ແຕ່ພະເຢຊູຄຣິດໄດ້ຊົງກ່າວອ້າງຢ່າງຊັດເຈນວ່າ ພະອົງຊົງເປັນພະເຈົ້າ.

ກ. ພະອົງຊົງອ້າງຢ່າງແຈ່ມແຈ້ງວ່າ ພະອົງເປັນພະເຈົ້າ

1. ພະອົງຕັດວ່າ ພະອົງຄື**<u>ພະຄຣິດ</u>** ພະບຸດຂອງພະເຈົ້າ

**ມາລະໂກ 14:61-63-64** : " ເຮົາເປັນ "
**ລູກາ 22:70** : " ກໍທ່ານວ່າແລ້ວວ່າເຮົາເປັນ "

ນີ້ຄືວິທີຕອບຄຳຖາມທີ່ສຳຄັນຕາມທຳນຽມຂອງຊາວຢິວ ພວກເຂົາເຂົ້າໃຈຢ່າງຊັດເຈນຈຶ່ງໄດ້ ກ່າວຫາພະອົງວ່າມີ່ນປະໝາດພະເຈົ້າແລະຄຶງພະອົງເທິງກາງແຂນກ່າວວ່າ **ມັດທາຍ27:43** " ເຂົາໄວ້ໃຈໃນພະເຈົ້າຖ້າພະອົງພໍພະໄທໃນເຂົາກໍໃຫ້ຊົງຊ່ອຍເຂົາດຽວນີ້ເຖີດຍ້ອນເຂົາໄດ້ກ່າວວ່າ ເຂົາເປັນພະບຸດຂອງພະເຈົ້າ"

GCI

ການທີ່ພະອົງຊົງຖືກໄຕ່ສວນນັ້ນບໍ່ແມ່ນເພາະສິ່ງທີ່ຊົງກະທຳ ແຕ່ເພາະຄຳກ່າວອ້າງຂອງພະອົງ ການໄຕ່ສວນຍັງຄົງດຳເນີນຕໍ່ໄປໃນທຸກມື້ນີ້ໃນໃຈຂອງຄົນທັງຫລາຍພະເຢຊູຊົງເປັນຢ່າງທີ່ພະອົງຊົງກ່າວອ້າງຫລືບໍ່

ກ) ພະອົງກ່າວວ່າ ພະອົງຊົງ**ເທົ່າທຽມ**ກັບພະເຈົ້າ

(1) **ໂຢຮັນ 10:30-33** "ເພາະທ່ານເປັນພຽງມະນຸດແຕ່ຕັ້ງຕົວເປັນພະເຈົ້າ"

(2) **ໂຢຮັນ 5:17-18** "ເພາະພະອົງລ່ວງກົດວັນສະບາໂຕ.. ແລະທຳຕົວເທົ່າທຽມກັບພະເຈົ້າ"

ຂ) ພະເຢຊູຊົງເອີ້ນຕົນເອງວ່າເປັນພະເຢໂຮວາ

(1) ໂຢຮັນ8:24 "ຖ້າທ່ານບໍ່ໄດ້ເຊື່ອວ່າເຮົາເປັນຜູ້ນັ້ນ ທ່ານຈະຕ້ອງຕາຍໃນການບາບຂອງຕົນ"

(2) **ໂຢຮັນ8:28** "ເມື່ອທ່ານທັງຫລາຍໄດ້ຍົກບຸດມະນຸດຂຶ້ນໄວ້ແລ້ວ ເມື່ອນັ້ນທ່ານກໍຈະຮູ້ວ່າເຮົາຄືຜູ້ນັ້ນ"

(3) **ໂຢຮັນ8:58** "ເຮົາບອກຄວາມຈິງແກ່ທ່ານວ່າ ເຮົາດຳລົງຢູ່ກ່ອນອັບລາຮາມເກີດ"

(4) ການທີ່ພະເຢຊູຊົງໃຊ້ຄຳວ່າ "ເຮົາເປັນ" ເທົ່າກັບປະກາດໃຫ້ທຸກ ຄົນໄດ້ຮູ້ ວ່າພະອົງຄື "ເຮົາເປັນຜູ້ຊຶ່ງເຮົາເປັນ ຫລື ເຢໂຮວາ" ຕາມພະທຳອົບພະຍົບ 3:24 ຊຶ່ງພະເຈົ້າໄດ້ສຳແດງພະນາມຂອງພະອົງແກ່ໂມເຊ ຊຶ່ງແປວ່າ **"ເຮົາເປັນຜູ້ຊຶ່ງ ເຮົາເປັນ"**

ຄ) ພະເຢຊູຊົງອ້າງໃນກຽດຕິຍົດຢ່າງດຽວກັນກັບທີ່ພະເຈົ້າໄດ້ຮັບ

(1) **ໂຢຮັນ5:23-24** ພະອົງຊົງອ້າງເຖິງສິດທິ ທີ່ຈະໄດ້ຮັບການນະມັດສະການຢ່າງພະເຈົ້າ ພະອົງຊົງເຕືອນຜູ້ທີ່ກ່າວຫາພະອົງໝິ່ນປະໝາດພະເຈົ້ານັ້ນ ແທ້ຈິງພວກເຂົານັ້ນແຫລະທີ່ກຳລັງໝິ່ນປະໝາດພະເຈົ້າ

ງ) ພະເຢຊູຕັດວ່າ ການຮູ້ຈັກພະອົງກໍເທົ່າກັບການຮູ້ຈັກພະເຈົ້າ **ໂຢຮັນ 8:29**

ຈ) ການວາງໃຈໃນພະເຈົ້ານັ້ນ ຄືການວາງໃຈໃນພະເຢຊູນັ້ນເອງ **ໂຢຮັນ 14:1**

ສ) "ເຮົາບອກຄວາມຈິງແກ່ທ່ານວ່າ " **ມັດທາຍ 5:20,22,26,28**

GCI

ພະອົງໄດ້ຍົກສິດອຳນາດແຫ່ງຄຳກ່າວຂອງພະອົງ ສູງເໜືອຄຳຂອງບັນດາຜູ້ເຜີຍພະວັດຈະນະຊຶ່ງກ່າວແທນພະເຈົ້າ

ຊ) ພະເຢຊູຊົງຮັບການນະມັດສະການໃນຖານະທີ່ເປັນພະເຈົ້າ
"ຈົ່ງກາບນະມັດສະການພະອົງຜູ້ເປັນພະເຈົ້າຂອງທ່ານ ແລະບົວລະບັດພະອົງແຕ່ຜູ້ດຽວ" **ມັດທາຍ 4:10**

(1) **ມັດທາຍ 8:2** <u>ຄົນຂີ້ທູດ</u>
(2) **ໂຢຮັນ 9:35-39** <u>ຊາຍຕາບອດ</u>
(3) **ມັດທາຍ 14:33** <u>ພວກສາວົກ</u>
(4) **ໂຢຮັນ 20:27-29** <u>ໂທມັດ</u>

ຄົນອື່ນໆປະຕິເສດທີ່ຈະນະມັດສະການ **ກິດຈະການ 10:25-26; ພະນິມິດ 19:10**

ຍ) ສິ່ງທີ່ຄົນອື່ນໆໄດ້ກ່າວ

(1) **<u>ໂປໂລ</u>** **ຟີລິບປອຍ 2:9-11; ຕີໂຕ 2:13**
(2) **<u>ໂຢຮັນ</u>** ຜູ້ໃຫ້ບັບຕິສະມາ **ລູກາ 3:22**
(3) **<u>ເປໂຕ</u>** **ມັດທາຍ 16:15-17; ກິດຈະການ 2:36**
(4) **ໂທມັດ** **ໂຢຮັນ 20:28**
(5) ຜູ້ຂຽນພະທຳ **<u>ເຮັບເຣີ</u>** **ເຮັບເຣີ 1:8**
(6) **<u>ສະເຕຟາໂນ</u>** **ກິດຈະການ 7:59**

ຂ. ຄຳກ່າວອ້າງຢ່າງອ້ອມໆຂອງພະອົງ

1. ພະອົງກ່າວອ້າງຕຳແໜ່ງຢ່າງດຽວກັນ:

## ພະເຢຊູຊົງເປັນພະເຈົ້າ

| ກ່າວເຖິງພະເຈົ້າ | ຕຳແໜ່ງ ຫລືພະຣາຊະກິດ | ກ່າວເຖິງພະເຢຊູ |
|---|---|---|
| ເອຊາຢາ 40:28 | ພະຜູ້ສ້າງ | ໂຢຮັນ 1:3 |
| ເອຊາຢາ 45:22;43:11 | ພະຜູ້ຊ່ວຍໃຫ້ພົ້ນ | ໂຢຮັນ 4:42 |
| 1 ຊາມູເອນ 2:6 | ເຮັດໃຫ້ຄົນເປັນຂຶ້ນ | ໂຢຮັນ 5:21 |
| ໂຢເອນ 3:12 | ຜູ້ພິພາກສາ | ໂຢຮັນ 5:27 |
| ເອຢາຊາ 60:19-20 | ຄວາມສະຫວ່າງ | ໂຢຮັນ 8:12 |

GCI

| | | |
|---|---|---|
| ອົບພະຍົບ 3:14 | ເຮົາເປັນຊຶ່ງເຮົາເປັນ | ໂຢຮັນ 8:58; 18:5-6 |
| ເພັງສັນລະເສີນ23:1 | ຜູ້ລ້ຽງແກະ | ໂຢຮັນ 10:11 |
| ເອຊາຢາ 42:8;48:11 | ພະສີລິຂອງພະເຈົ້າ | ໂຢຮັນ10:11 |
| ເອຊາຢາ 41:4; 44:6 | ເປັນເບື້ອງຕົ້ນ ແລະເບື້ອງປາຍ | ພະນິມິດ 1:17,2:8 |
| ໂຮເຊຢາ 13:14 | ພະຜູ້ໄຖ່ | ພະນິມິດ 5:9 |
| ເອຊາຢາ 62:5;ໂຮເຊຢາ 2:16 | ເຈົ້າບ່າວ | ພະນິມິດ 21:2;ມັດທາຍ 25:1 |
| ເພັງສັນລະເສີນ 18 | ພະສີລາ | 1ໂກຣິນໂທ 10:4 |
| ເຢເຣມີ 31:34 | ຜູ້ຍົກໂທດບາບ | ມາລະໂກ 2:7,10 |
| ເພັງສັນລະເສີນ 148:2 | ຮັບການນະມັດສະການຈາກທູດສະຫວັນ | ເຮັບເຣີ 1:6 |
| ພະຄໍາພີເດີມທັງເຫລັ້ມ | ເປັນຜູ້ຮັບຄໍາອະທິຖານ | ກິດຈະການ 7:59 |
| ເພັງສັນລະເສີນ 148:5 | ຜູ້ສ້າງທູດສະຫວັນ | ໂກໂລຊາຍ 1:16 |
| ເອຊາຢາ | ທຸກປາກຍອມຮັບວ່າເປັນພະຜູ້ເປັນເຈົ້າ | ຟີລິບບອຍ 2:11 |

2. ພະອົງຊົງຍົກໂທດບາບ ມາຣະໂກ 2:5 ລູກາ 7:48
   ນີ້ບໍ່ແມ່ນສິດທິອໍານາດຂອງມະນຸດ ມີແຕ່ພະເຈົ້າຊຶ່ງທຸກຄົນໄດ້ເຮັດບາບຕໍ່ເທົ່ານັ້ນຈຶ່ງຈະຍົກໂທດບາບໄດ້

3. ພະອົງບໍ່ເຄີຍປ່ຽນແປງ ເຮັບເຣີ 13:8 ທຽບກັບ ມາລາກີ 3:6
   ພັນລະນາເຖິງພະເຢຊູໂດຍລັກສະນະຄວາມເປັນນິລັນດອນຂອງພະເຈົ້າ

4. ພະເຢຊູຊົງອ້າງວ່າພະອົງເປັນຊີວິດ ໂຢຮັນ 14:6 1 ໂຢຮັນ 5:11-12

5. ພະເຢຊູຊົງອ້າງວ່າສິດທິອໍານາດທັງສິ້ນເປັນຂອງພະອົງ ໂຢຮັນ 5:27 ; ມັດທາຍ 28:18
6. ພະເຢຊູຊົງອ້າງວ່າ ເປັນຜູ້ສ້າງ ແລະຜູ້ດູແລຮັກສາຂອງສິ່ງສາລະພັດທັງສິ້ນ
   ໂກໂລຊາຍ 1:16 ເຮັບເຣີ 1:3 ມີແຕ່ພະເຈົ້າເທົ່ານັ້ນທີ່ສາມາດຄວບຄຸມຈັກກະວານນີ້ໄດ້

## VIII. ຊີວິດ ແລະຄໍາສອນທີ່ບໍລິສຸດ

ກ. ຊີວິດຂອງພະອົງ

1. ຄໍາກ່າວຂອງພະອົງເອງ
   ກ) **ໂຢຮັນ 8:46** "ຜູ້ໃດໃນພວກທ່ານ ຫລືທີ່ຊີ້ໃຫ້ເຫັນວ່າເຮົາໄດ້ເຮັດຜິດ"
   ບໍ່ມີໃຜຕອບພະອົງໄດ້ ພະອົງທ້າທາຍໃຫ້ພວກເຂົາກວດສອບໄດ້

GCI

ຂ) ໂຢຮັນ 8:29 "ເຮົາເຮັດຕາມຊອບພະໄທພະອົງສະເໝີ"

ຄ) ໂຢຮັນ 14:30 "ເຈົ້າໂລກຈະມາ ຜູ້ນັ້ນບໍ່ມີສິດທິອໍານາດອັນໃດເໜືອເຮົາ"

2. ຄໍາພະຍານຢືນຢັນຈາກບັນດາສະຫາຍຂອງພະອົງຊຶ່ງປາກົດຢູ່ຕະຫລອດໃນພະຄໍາພີໃຫມ່ຄວາມຫລົ້ມເຫລວ ແລະຄວາມບາບຂອງເຫລົ່າອັກຄະສາວົກຕ່າງໆຖືກກ່າວເຖິງເລື້ອຍໆ ແຕ່ບໍ່ມີຊ່ວງເວລາໃດເລີຍທີ່ມີການກ່າວເຖິງຄວາມບາບໃນຊີວິດຂອງພະຄຣິດ

ກ) ໂປໂລ 2 ໂກຣິນໂທ 5:21 "ພະອົງຜູ້ຊຶ່ງບໍ່ມີບາບ

ຂ) ເຮັບເຣີ 4:15 "ເຖິງປານນັ້ນພະອົງກໍຍັງປັດສະຈາກບາບ"

ຄ) ເຮັບເຣີ7:26 "ເປັນຜູ້ບໍລິສຸດ ປັດສະຈາກອຸບາຍບໍ່ມີມົນທິນ ແຍກຈາກຄົນບາບທັງປວງ"

ງ) 1 ເປໂຕ 2:22 "ພະອົງບໍ່ໄດ້ຊົງເຮັດບາບເລີຍ ແລະບໍ່ໄດ້ກ່າວຄໍາຂີ້ຕົວະ"

3. ຄໍາພະຍານຢືນຢັນຈາກສັດຕູຂອງພະອົງ

ກ) ຢູດາ ມັດທາຍ 27:3-4 "ໄດ້ອາຍັດຄົນບໍລິສຸດມາໃຫ້ເຖິງຄວາມຕາຍ"

ຂ) ໂຈນ ລູກາ 23:41 "ທ່ານຜູ້ນີ້ບໍ່ໄດ້ເຮັດຜິດປະການໃດເລີຍ"

ຄ) ປີລາດ ໂຢຮັນ 18:38 "ເຮົາບໍ່ເຫັນຄົນນັ້ນມີຄວາມຜິດ"

ງ) ນາຍຮ້ອຍ ລູກາ 23:47 " ແທ້ຈິງທ່ານຜູ້ນີ້ເປັນຄົນຊອບທໍາ"

4. ຄໍາພະຍານຢືນຢັນຈາກປະຫວັດສາດ

ກ) ຄໍາພີໂກນອານ (ມາລາກີ ຂໍ້ 19) ທູດສະຫວັນຄັບລີເອນໄດ້ມາຫານາງມາລີອາ ແລະບອກແກ່ນາງວ່າພະເຢຊູບຸດຂອງນາງນັ້ນຈະເປັນຜູ້ທີ່ "ປັດສະຈາກ ຄວາມຜິດ"

ພະເຢຊູຊົງໄວ້ຊຶ່ງເອກກະລັກພິເສດ ເພາະບໍ່ເຄີຍມີມະນຸດຄົນໃດເລີຍ ທີ່ປັດສະຈາກຄວາມບາບ

ຂ. ຄໍາສອນຂອງພະອົງ - ໂດຍຄໍາສອນ ແລະການກະທໍາ

1. ໂຢຮັນ 2:14-17 ການຊໍາລະພະວິຫານ
2. ໂຢຮັນ 5:14 "ນີ້ແຫລະຢ່າເຮັດບາບອີກບໍ່ສະນັ້ນເຫດຮ້າຍກວ່ານັ້ນຈະເກີດ ກັບ ເຈົ້າ"
3. ໂຢຮັນ 8:11 "ຈົ່ງໄປເຖີດ ແລະຢ່າເຮັດຜິດອີກ"
4. ມັດທາຍ 5:6,8 ຄໍາເທດສະໜາເທິງພູເຂົາ
5. ມັດທາຍ5:10-12 "ບຸກຄົນຜູ້ໃດຕ້ອງຖືກຂົ່ມເຫງເພາະເຫດຄວາມຊອບທໍາຜູ້ນັ້ນເປັນສຸກ"
6. ມັດທາຍ 5:13-20 "ຈົ່ງສ່ອງສະຫວ່າງແກ່ຄົນທັງປວງ"
7. ມັດທາຍ 5:21-48 "ຄວາມເຂັ້ມງວດຈິງຈັງຂອງບາບ

GCI

8. ມັດທາຍ 6:1-4 ການເຮັດທານ
9. ມັດທາຍ 6:16-18 ການອົດອາຫານ
10. ລູກາ 18:9-14 ຄວາມຊອບທຳ
11. ມັດທາຍ 7:13-23 ທາງ ແລະຜົນຂອງຄວາມຊອບທຳ
12. ມັດທາຍ 12:33-37 ຄຳເວົ້າສະແດງເຖິງບຸກຄະລິກ
13. ມັດທາຍ 17:24-27 ການເສັຽພາສີ
14. ມັດທາຍ 18:8-11 ຄວາມຮ້າຍແຮງຂອງບາບ
15. ມັດທາຍ 21:12-13 ສິ່ງທີ່ຕ້ອງເຮັດແລະຫ້າມເຮັດໃນວິຫານຂອງພະເຈົ້າ
16. ມັດທາຍ 22:15-22 ເສັຽພາສີ
17. ມັດທາຍ 22:23-33 ການສົມລົດ
18. ມັດທາຍ 22:34-40 ພະບັນຍັດຂໍ້ໃຫຍ່
19. ມັດທາຍ 22:41-46 ພະຄຣິດເປັນບຸດຂອງໃຜ?
20. ມັດທາຍ 23:1-36 ຟາລີຊາຍຜູ້ເຄັ່ງສາດສະໜາຖືກເປີດໂປງ

# IX. ພະອົງດຳເນີນຊີວິດ ແລະສອນຊີວິດແຫ່ງການອະທິຖານ

ກ. ຊີວິດຂອງພະອົງ

1. ລູກາ 4:42 : "ໃນທີ່ປ່ຽວ
2. ລູກາ 5:16 : "ປີກຕົວໄປໃນຖິ່ນກັນດານ"
3. ລູກາ 6:12-13 : "ຊົງອະທິຖານຕະຫລອດຄືນຈົນແຈ້ງ"
4. ລູກາ 9:18 : "ຊົງອະທິຖານຕາມລຳພັງ"
5. ລູກາ 9:28-29 : "ພະກາຍຂອງພະອົງໄດ້ປ່ຽນໄປ"
6. ໂຢຮັນ 5:19-20 : "ໄດ້ເຫັນສິ່ງທີ່ພະບິດາຊົງກະທຳ
7. ໂຢຮັນ 5:30 : ໄດ້ຍິນເຖິງສິ່ງທີ່ພະບິດາຊົງກ່າວ
8. ມັດທາຍ 26:36-40 : ຄ່ຳຄວນອະທິຖານໃນສວນເຄັດເຊມາເນ

ຂ. ພະອົງຊົງສອນເຖິງຄວາມສຳຄັນຂອງການອະທິຖານ

1. ລູກາ 11:1-10 : " ພະອົງເຈົ້າຂ້າ ໂປດສອນພວກຂ້າພະອົງໃຫ້ອະທິຖານ"
2. ລູກາ 18:1-8 : ຄຳອຸປະມາສອນເລື່ອງການອະທິຖານ
3. ມັດທາຍ 6:5-8 : ວິທີການອະທິຖານ
4. ມັດທາຍ 7:7-11 : ການໜູນໃຈໃຫ້ອະທິຖານ

# X. ຊີວິດທີ່ມີຄຸນລັກສະນະພິເສດໃນຖານະພະບຸດຂອງພະເຈົ້າ

GCI

ກ. ຊີວິດຂອງພະອົງ

1. ເທົ່າທຽມກັບພະບິດາ ແຕ່ເພິ່ງພາໃນພະອົງ ຟີລິບບອຍ 2:6 -7
   - ກ) ໂຢຮັນ5:18-32 ຈະບໍ່ເຮັດສິ່ງໃດໂດຍພະອົງເອງນອກຈາກທີ່ໄດ້ຍິນ ແລະໄດ້ເຫັນພະ ບິດາເຮັດ
   - ຂ) ໂຢຮັນ 8:28,38 “ເຮົາຄືຜູ້ນັ້ນ ແຕ່ເຮົາບໍ່ໄດ້ເຮັດສິ່ງໃດຕາມລຳພັງ”
   - ຄ) ໂຢຮັນ 10:30-33 ພວກເຮົາຈຶ່ງຫຍິບກ້ອນຫີນເພື່ອຈະແກ່ວງໃສ່ພະອົງ
   - ງ) ໂຢຮັນ 14:7-11 ການໄດ້ເຫັນພະບຸດກໍເທົ່າກັບໄດ້ເຫັນພະບິດາ
   - ຈ) ໂຢຮັນ 19:7 “ເຂົາຈະຕ້ອງຕາຍ ເພາະເຂົາທຳຕົວເທົ່າທຽມກັບພະເຈົ້າ”

2. ເຮົາຕ້ອງເພິ່ງພາໃນພະບິດາຂອງເຮົາ ນີ້ເປັນສິ່ງທີ່ຕ້ອງໃຊ້ຄວາມເຊື່ອ
   - ກ) ມັດທາຍ6:6-9 ຄວາມຕ້ອງການຂອງເຮົາໄດ້ຮັບການຕອບສະໜອງເມື່ອເຮົາ ທູນຂໍພະບິດາ
   - ຂ) ມັດທາຍ 6:25-34 ຄວາມເຊື່ອນ້ອຍເຮັດໃຫ້ຄົນກະວົນກະວາຍ
   - ຄ) ມັດທາຍ8:23-27 ຄວາມເຊື່ອນ້ອຍ ກໍ່ໃຫ້ເກີດຄວາມຢ້ານໃນຍາມປະເຊີນພະ ຍຸໃນຊີວິດ
   - ງ) ມັດທາຍ 14:31 ຄວາມເຊື່ອນ້ອຍ ບໍ່ເກີດການອັດສະຈັນ
   - ຈ) ມັດທາຍ 16:8 ຄວາມເຊື່ອນ້ອຍເຮັດໃຫ້ເຮົາສົງໃສໃນຄວາມສາມາດຂອງຕົນ
   - ສ) ມັດທາຍ8:9-10 ຄວາມເຊື່ອຫລາຍ ຍອມຮັບໃນລິດອຳນາດ ແຫ່ງຄຳຕັດຂອງ ພະເຢຊູ
   - ຊ) ມັດທາຍ 21:21-22 ຄວາມເຊື່ອທີ່ເຄື່ອນຍ້າຍພູເຂົາ
   - ຍ) ໂຢຮັນ 11:40 “ຖ້າເຈົ້າເຊື່ອ ເຈົ້າຈະໄດ້ເຫັນຄວາມຍິ່ງໃຫຍ່ຂອງພະເຈົ້າ”

## XII. ພະອົງດຳເນີນຊີວິດທີ່ເຕັມໄປດ້ວຍການເຮັດການອັດສະຈັນ

ກ. ຊີວິດຂອງພະອົງ

ລູກາ 7:20-22

1. ໂຢຮັນ 2:1-11 ປ່ຽນນ້ຳໃຫ້ເປັນນ້ຳອະງຸ່ນ
2. ມັດທາຍ 8:26-27 ເຮັດໃຫ້ລົມພະຍຸແລະທະເລສະຫງົບ
3. ມັດທາຍ 14:13-21 ລ້ຽງຄົນ 5000 ຄົນ ດ້ວຍເຂົ້າຈີ່ຫ້າກ້ອນກັບປາສອງໂຕ
4. ມັດທາຍ 15:32-39 ລ້ຽງຄົນ 4000ຄົນ ດ້ວຍເຂົ້າຈີ່ເຈັດກ້ອນກັບປາສອງຕົວ
5. ມັດທາຍ 17:24-27 ຫລຽນເງິນໃນປາກປາ

GCI

6. ມັດທາຍ 21:18-22 ປະກາດວ່າຕົ້ນໝາກເດື່ອຈະບໍ່ອອກຜົນອີກຕໍ່ໄປ
7. ລູກາ 7:11-15 ເຮັດໃຫ້ລູກຂອງຍິງໝ້າຍເປັນຂຶ້ນມາຈາກຄວາມຕາຍ
8. ລູກາ 8:41-56 ເຮັດໃຫ້ລູກສາວຂອງໂຢຣັນເປັນຂຶ້ນມາຈາກຄວາມຕາຍ
9. ໂຢຮັນ 11:1-44 ເຮັດໃຫ້ລາຊາໂລເປັນຂຶ້ນມາຈາກຄວາມຕາຍ

ລິດເດດໃນການເຮັດການອັດສະຈັນເໜືອທຳມະຊາດເຫລົ່ານີ້ ຕ້ອງມາຈາກພະເຈົ້າຊຶ່ງເປັນຕົ້ນກຳເນີດແຫ່ງພະລັງອຳນາດເຫລົ່ານີ້ເທົ່ານັ້ນ

ໂຢຮັນ 2:11,23;3:2; 4:54;6:2,14,26,30;7:31; 9:16; 10:37-41,11:47; 12:18,37 20:30-31

ຂ. ຄຳສອນຂອງພະອົງ

1. ໂຢຮັນ 14:10-15 ເຮົາຕ້ອງເຮັດຢ່າງດຽວກັນເພື່ອຖວາຍກຽດແດ່ພະບິດາ
2. ມັດທາຍ10:7-8 " ຈົ່ງອອກໄປ...ເທດສະໜາ..ຮັກສາໂລກ..ເຮັດໃຫ້ຄົນເປັນຂຶ້ນ..ຮັກສາ ໃຫ້ຫາຍສະອາດ..ຂັບຜີ"
3. ມັດທາຍ 14:25-33 ເປໂຕຍ່າງເທິງນ້ຳ
4. ມາຣະໂກ 11:22-25 ຄວາມເຊື່ອທີ່ຍ້າຍພູເຂົາໄດ້

ຄ. ຄຳພະຍານຈາກຜູ້ອື່ນ

1. ຄຳພີໂກຣານ (ເດີະ ເທເບີລ ຂໍ້ 110) ໄດ້ກ່າວວ່າພະເຢຊູຮັກສາຄົນຕາບອດ ຄົນຂີ້ທູດ ແລະເຮັດໃຫ້ຄົນຕາຍເປັນຂຶ້ນມາ ສາດສະໜາອິດສະລາມຍອມຮັບໃນການອັດສະຈັນຂອງ ພະເຢຊູ
2. ເອເທີເບີດສະຕອບພ໌ "ເຮົາໄດ້ພົບການອັດສະຈັນຂອງພະເຢຊູຫລາຍຢ່າງບັນທຶກໄວ້ໃນໜັງສືພະບັນຍັດ ແລະປະຫວັດສາດຂອງຊາວຢິວ"
3. ປະມານປີ ຄສ 75 ຮັບບີ ເອລີເອເຊີ ເບນ ເທີແຄນັດ ແຫ່ງເມືອງລິດດາໄດ້ກ່າວເຖິງ "ການສະແດງອຳນາດວິເສດ" ຂອງພະເຢຊູ
4. ປີ ຄສ 95-110 ບັນທຶກຂອງສະພາແຊນຮີດລີນ ຂໍ້43A ຂຽນໄວ້ວ່າ "ພະເຢຊູ ໄດ້ກະທຳການອັດສະຈັນ ແລະຊັກນຳຊົນອິດສະລາເອນໃຫ້ຫລົງໄປ"
5. ປະມານປີ ຄສ 110 ຊາວຢິວໃນປາແລັດສະໄຕ ມີການໂຕ້ແຍ້ງກັນໃນເລື່ອງທີ່ວ່າເປັນສິ່ງຖືກຕ້ອງຫລືບໍ່ທີ່ຈະຮັກສາຄົນປ່ວຍໃຫ້ຫາຍໂດຍໃຊ້ນາມຂອງພະເຢຊູ

## XIII. ພະອົງດຳເນີນຊີວິດຢ່າງຜູ້ຮັບໃຊ້

GCI

ກ. ຊີວິດຂອງພະອົງ

1. ຟີລິບບອຍ 2:7 ເລີ່ມຕົ້ນທີ່ໃນສະຫວັນ
2. ມັດທາຍ20:28 ພະອົງສະເດັດມາໃນໂລກໂດຍຈຸດປະສົງດັ່ງກ່າວ
3. ໂຢຮັນ 13:1-17 ຕົວຢ່າງອັນສູງສົ່ງ

ທຸກສິ່ງທີ່ພະອົງຊົງກະທຳນັ້ນກໍເພື່ອຊ່ວຍແກ້ໄຂບັນຫາຂອງຜູ້ອື່ນ

ຂ. ພະອົງຊົງສອນໃຫ້ເຮົາປົນນິບັດຜູ້ອື່ນ

1. ມັດທາຍ 5:3 ທັດສະນະຄະຕິ
2. ມັດທາຍ 20:20-28 ວິທີການທີ່ຈະເປັນຄົນຕົ້ນ
3. ມັດທາຍ 23:1-12 ຕົວຢ່າງຂອງພວກຟາລີຊາຍ
4. ລູກາ 22:24-27 ຄວາມປາດຖະໜາແບບເດັກນ້ອຍ

ຄ. ພະອົງຊົງໃຫ້ເຮົາປົນນິບັດພະອົງ

1. ມັດທາຍ 6:19-34 ຊັບສົມບັດອັນແທ້
2. ມັດທາຍ 7:24-29 ວິທີການສ້າງບ້ານ
3. ລູກາ 17:7-10 ໜ້າທີ່ຂອງຄົນຮັບໃຊ້

## XIV. ພະອົງດຳເນີນຊີວິດໃນຄວາມຮັກ - ຄວາມໃສ່ໃຈ ຄວາມເມດຕາ ແລະ ຄວາມຫ່ວງໄຍ

ກ. ຊີວິດຂອງພະອົງ

1. ມັດທາຍ 9:10-13 ພະອົງຮ່ວມຮັບປະທານອາຫານກັບຄົນເກັບພາສີ ແລະຄົນບາບ
2. ມັດທາຍ 9:35-38 ເປັນທຸກໃຈເພາະຂາດຜູ້ລ້ຽງ
3. ມັດທາຍ 11:28-30 ຄຳເຊີນຊວນໃຫ້ຮັບການພຳນັກ
4. ມັດທາຍ 15:7-21 ຄຸນຄ່າຂອງຄົນນຶ່ງຄົນ
5. ມັດທາຍ 20:34 ພະເຢຊູຮູ້ສຶກສົງສານຜູ້ຄົນ

ຂ. ຄຳສອນຂອງພະອົງ

1ໂຢຮັນ 4:7-21 "ພະເຈົ້າຊົງເປັນຄວາມຮັກ"

GCI

1. ມັທາຍ 5:5,7,9 ຜູ້ທີ່ໄດ້ຮັບພະພອນ
2. ມັດທາຍ 5:42-48 ພວກເຮົາຕ້ອງເປັນຄືພະບິດາຂອງເຮົາ
3. ມັດທາຍ 7:1-6 ຖາງປ່າເພື່ອໃຫ້ເບິ່ງເຫັນໄດ້ຊັດເຈນຂຶ້ນ
4. ມັດທາຍ 7:12 ທອງ
5. ມັດທາຍ 18:15-20 ຂັ້ນຕອນໃນການເຮັດໃຫ້ກັບສູ່ສະພາບດີ
6. ມັດທາຍ 18:21-35 ຫລີກລ້ຽງຜູ້ທີ່ເຮັດໃຫ້ເກີດຄວາມທຸກ
7. ມັດທາຍ 19:1-12 ເລື່ອງຂອງການຢ່າຮ້າງ
8. ມັດທາຍ 19:13-15 ຄຸນຄ່າຂອງເດັກ

## XV. ການຮັກສາຄົນເຈັບ

ກ. ຊີວິດຂອງພະອົງ

1. ມັດທາຍ 8:1 -3,14-17 "ເຮົາເຕັມໃຈທີ່ຈະຮັກສາ"
2. ມັດທາຍ 9:22,29,35 "ໃຫ້ເປັນໄປຕາມຄວາມເຊື່ອຂອງເຮົາ"
3. ມັດທາຍ12:22 ພະອົງເວົ້າແລະເບິ່ງເຫັນ
4. ມັດທາຍ14:34-46 ທຸກຄົນທີ່ໄດ້ຮັບການແຕະຕ້ອງກໍຫາຍປ່ວຍ
5. ມັດທາຍ15:29-31 ປະຊາຊົນຈໍານວນຫລາຍ
6. ມັດທາຍ21:41 ຄົນຕາບອດແລະຄົນງ່ອຍ

ຂ. ຄໍາສອນຂອງພະອົງ

1. ມັດທາຍ 8:5-13 ນາຍນ້ອຍຢູ່ໃຕ້ວິໃນທະຫານ
2. ມັດທາຍ 10:1-15 "ຈົ່ງອອກໄປເທດສະໜາແລະຮັກສາໂລກ"
3. ມາລະໂກ16:15,18 "ຈົ່ງອອກໄປເທດສະໜາແລະຄົນປ່ວຍຈະຫາຍດີ"

## XVI. ຊີວິດທີ່ເຕັມໄປດ້ວຍການທົນທຸກ ແລະຄວາມຍາກລໍາບາກ

ກ. ຊີວິດຂອງພະອົງ

1. ມັດທາຍ 12:14 ການວາງແຜນທີ່ຈະປະຫານພະອົງ ໂຢຮັນ 7:30,44,8:59, 10:31, 39, 11:53
2. ມັດທາຍ 21:23-27 ຄົນສົງໃສ ແລະບໍ່ຍອມຮັບສິດທິອໍານາດຂອງພະອົງ
3. ມັດທາຍ 26:14-25 ຢູດາຕໍ່ລອງລາຄາເພື່ອທໍລະຍົດພະອົງ

GCI

4. ມັດທາຍ26:30-35 ຊົງຮູ້ ແລະພະຍາກອນລ່ວງໜ້າວ່າເປໂຕ ແລະຄົນອື່ນໆຈະປະ ຖິ້ມພະອົງ
5. ມັດທາຍ 26:47-56 ພະອົງຖືກອາຍັດ ແລະຈັບກຸມຕົວ
6. ມັດທາຍ 26:57-68 ຕໍ່ໜ້າຄາຍາຟາມະຫາປະໂລຫິດ - ຖືກທຸບຕີ ແລະເຍະເຍີ້ຍ
7. ມັດທາຍ 26:69-75 ເປໂຕປະຕິເສດພະເຢຊູ
8. ມັດທາຍ27:1-26 ຕໍ່ໜ້າປີລາດ ຜູ້ວ່າການຊາວໂຣມ - ມີການປ່ອຍຕົວຄາດຕະກອນບາລາບັດ ແຕ່ລົງໂທດພະເຢຊູ ຊົງຖືກຂ້ຽນຕີ ຈີກເສື້ອຜ້າ ຖືກເຍາະເຍີ້ຍສວມມົງກຸດໜາມຖືກຖົ່ມນໍ້າລາຍ ຖືກຕີດ້ວຍໄມ້ ແລະຄຶງທີ່ກາງແຂນເປັນເວລາ 6ຊົ່ວໂມງ (ຕັ້ງແຕ່ 9.00 - 15.00 ໂມງ) ຈົນຄ່ອຍໆສິ້ນຊີວິດໄປຢ່າງທຸກທໍລະມານ

ຂ. ຄໍາສອນຂອງພະອົງ

1. ມັດທາຍ5:4 ຄວາມສຸກເປັນຂອງບຸກຄົນຜູ້ໂສກເສົ້າເພາະວ່າເຂົາຈະໄດ້ຮັບການຊົງປອບປະໂຮມ
2. ມັດທາຍ8:19-22 ຊີວິດທີ່ຍາກລໍາບາກເປັນເຄື່ອງທົດສອບການອຸທິດຕົວຂອງສາວົກພະອົງ
3. ມັດທາຍ 10:16-42 ທ່ານອາດຖືກຂ້ຽນຕີ ຂຶ້ນຄານ ຖືກກຽດຊັງ ແລະຖືກປະຫານ

# XVII. ດໍາເນີນຊີວິດຢ່າງກະສັດຊຶ່ງຄົນບໍ່ຍອມຮັບ

ກ. ຊີວິດຂອງພະອົງ

1. ມັດທາຍ 21:1-11 : ກະສັດສະເດັດເຂົ້າໄປຍັງກຸງເຢລູຊາເລັມ
2. ມັດທາຍ 21:15-17 : ໄດ້ຮັບການນະມັດສະການວ່າເປັນກະສັດອົງນຶ່ງ
3. ມັດທາຍ 27:11 : ພະເຢຊູປະກາດແກ່ປີລາດວ່າພະອົງເປັນກະສັດ
4. ມັດທາຍ 27:29 : ຖືກເຍີ້ຍຢັນວ່າເປັນກະສັດຂອງພວກຢິວ
5. ມັດທາຍ 27:37 : ຖືກຄຶງໃນຂໍ້ຫາທີ່ເປັນກະສັດຂອງພວກຢິວ

ຂ. ຄໍາສອນຂອງພະອົງ

1. ມັດທາຍ 12:24-32 ຄວາມຂັດແຍ້ງລະຫວ່າງອານາຈັກ ບາບທີ່ຍົກໂທດໃຫ້ບໍ່ໄດ້
2. ມັດທາຍ 12:38-45 ການພິພາກສາສໍາລັບຜູ້ທີ່ບໍ່ຍອມຮັບອົງກະສັດ
3. ມັດທາຍ 12:46-50 ບັນດາບຸດແຫ່ງກະສັດ
4. ມັດທາຍ 13:1-52 ຂໍ້ລັບລຶກແຫ່ງອານາຈັກສະຫວັນ
5. ມັດທາຍ 15:1-20 ຈິດໃຈທີ່ຊົ່ວຮ້າຍຂອງມະນຸດ

GCI

6. ມັດທາຍ 16:1-12 ຈົ່ງລະວັງວ່າທ່ານຈະຟັງຄຳສອນຂອງໃຜ
7. ມັດທາຍ 18:1-5 ການທີ່ຈະເປັນໃຫຍ່ໃນແຜ່ນດິນສະຫວັນ
8. ມັດທາຍ 18:6-7 ຢ່າງວາງບ້ວງໃຫ້ສະດຸດ
9. ມັດທາຍ 19:16-30 ຄ່າຂອງຊີວິດນິລັນດອນ
10. ມັດທາຍ 20:1-16 ລະບົບຂອງຄຸນງາມຄວາມດີ
11. ມັດທາຍ 20:20-28 ການຈັດຕຳແໜ່ງບ່ອນນັ່ງ
12. ມັດທາຍ 21:28-32 ຄົນນຶ່ງໄດ້ເຂົ້າໄປ ອີກຄົນນຶ່ງບໍ່
13. ມັດທາຍ 21:33-46 ຈົ່ງລະວັງໃນເລື່ອງຊັບສິນທີ່ເຊົ່າ
14. ມັດທາຍ 22:1-14 ທ່ານຄວນໄປຮ່ວມງານມົງຄຸນສົມລົດ
15. ມັດທາຍ 23:37-39 ຜົນລັບ ຂອງການປະຕິເສດຂອງກະສັດ
16. ມັດທາຍ 24:1-51 ໝາຍສຳຄັນບອກເວລາ
17. ມັດທາຍ 25:1-13 ຈົ່ງລະມັດລະວັງໃນການກະທຳໃຫ້ດີໃນຂະນະທີ່ກຳລັງລໍຄອຍ
18. ມັດທາຍ 25:14-30 ວັນນຶ່ງຈະເຖິງເວລາຮັບບຳເໜັດ
19. ມັດທາຍ 25:31-46 ກະສັດຊົງພິພາກສາບັນດາປະຊາຊາດ

# XVIII.ຊີວິດທີ່ມີຄຸນລັກສະນະພິເສດໃນຖານະພະຜູ້ຊ່ວຍໃຫ້ພົ້ນ

ກ. ພະອົງຊົງຊ່ວຍໃຫ້ພົ້ນ

1. ມັດທາຍ 8:23-27 : ຈາກຄື້ນແລະລົມພະຍຸ
2. ມັດທາຍ 8:28-34 : ຈາກຜີຮ້າຍ
3. ມັດທາຍ 9:2-8 : ຊົງຍົກໂທດບາບ
4. ມັດທາຍ 15:21-28 : ລວມທັງຄົນຕ່າງຊາດດ້ວຍ
5. ມັດທາຍ 17:14-21 : ເລື່ອງທີ່ຍາກທີ່ສຸດ

ຂ. ຄຳສອນຂອງພະອົງ

1. ໂຢຮັນ 3:15-16 "ເພື່ອທຸກຄົນທີ່ວາງໃຈໃນພະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫລອດໄປເປັນນິດ"
2. ໂຢຮັນ 14:6 "ເຮົາເປັນທາງນັ້ນເປັນຄວາມຈິງ ແລະເປັນຊີວິດບໍ່ມີຜູ້ໃດມາເຖິງພະບິ ດາໄດ້ນອກຈາກຈະມາທາງເຮົາ"
3. ໂຢຮັນ 3:18-36,5:24,6:40, 8:51-52,11:25-28
4. ມັດທາຍ 16:21-28 ພະອົງຈະຖືກປັບໂທດເຖິງຕາຍ ແຕ່ຈະຖືກຊຸບຂຶ້ນມາໃຫມ່
5. ມັດທາຍ 17:10-13,22:23 ພະອົງຈະຖືກປັບໂທດເຖິງຕາຍ ແຕ່ຈະຖືກຊຸບຂຶ້ນມາໃຫມ່
6. ມັດທາຍ 18:12-14 ຄວາມສຳຄັນໃນການຕາມຫາແກະທີ່ຫລົງຫາຍ

GCI

7. ມັດທາຍ 20:17-19 ພະອົງຈະຖືກປັບເຖິງຕາຍ ແຕ່ຈະຖືກໃຫ້ຄືນຂຶ້ນມາໃຫມ່
8. ມັດທາຍ 26:1-5 ພະອົງຈະຖືກປັບໂທກເຖິງຕາຍ ແຕ່ຈະຖືກຊຸບຂຶ້ນມາໃຫມ່
9. ມັດທາຍ 26:26-29 ໂລຫິດແຫ່ງພັນທະສັນຍາຂອງພະອົງເພື່ອການຍົກໂທດບາບ

ຄ. ຄຳພະຍານຈາກຜູ້ອື່ນ

1. ໂຢຮັນຜູ້ໃຫ້ບັບຕິດສະມາ ໂຢຮັນ 1:29 "ເບິ່ງເຖີດ ພະເມສານ້ອຍຂອງພະເຈົ້າ ຜູ້ຊົງຮັບແບກ ບາບຂອງໂລກ"
2. ເປໂຕ ກິດຈະການ 4:12
3. ໂປໂລ 2 ຕີໂມທຽວ 1:10

## XIX. ການສິ້ນພະຊົນຊຶ່ງມີລັກສະນະພິເສດ

ກ. ການສິ້ນພະຊົນຂອງພະອົງຖືກພະຍາກອນໄວ້ລ່ວງໜ້າ

ການສິ້ນພະຊົນຂອງພະເຢຊູຄຣິດຖືກກ່າວເຖິງຫລາຍກວ່າ 120 ຄັ້ງໃນພັນທະສັນຍາໃຫມ່ ແລະຜູ້ເຜີຍພະວັດຈະນະໃນພັນທະສັນຍາເດີມກໍກ່າວເຖິງຫລາຍຄັ້ງ

ຂ. ການສິ້ນພະຊົນຂອງພະອົງເປັນສິ່ງທີ່ຄົນລະລຶກເຖິງ ເພາະພະອົງກ່າວວ່າ ພະອົງຊົງເປັນພະເຈົ້າ

ທຸກຄົນຮູ້ດີວ່າ ພະເຢຊູຊົງເປັນຜູ້ຍິ່ງໃຫຍ່ເຕັມດ້ວຍສະຕິປັນຍາດີເລີດບໍລິສຸດ ແລະປັດສະຈາກຄວາມຜິດ ແຕ່ເພາະພະອົງຊົງອ້າງຕົນວ່າເປັນພະເຈົ້າ ມະນຸດຈຶ່ງປະຫານພະອົງດ້ວຍ ວິທີການທີ່ໂຫດຮ້າຍທາລຸນທີ່ສຸດເທົ່າທີ່ເຄີຍມີມາໂດຍການຄຶງເທິງໄມ້ກາງແຂນ ເພື່ອໃຫ້ພະອົງສິ້ນພະຊົນຢ່າງຊ້າໆເຈັບປວດ ແລະທົນທຸກທໍລະມານຢ່າງທີ່ສຸດ

ຄ. ເປັນການສິ້ນພະຊົນແທນເຮົາ

ການສິ້ນພະຊົນຂອງພະເຢຊູນັ້ນ ເປັນການສິ້ນພະຊົນແທນທີ່ເຮົາທັງຫລາຍ ມັດທາຍ 20:28 ພະອົງຊົງຮັບແບກບາບແທນເຮົາທັງຫລາຍ 2 ໂກຣິນໂທ 5:21

ງ. ການສິ້ນພະຊົນຂອງພະອົງເປັນໄປຕາມທຳມະຊາດ
ໂຢຮັນ 19:31-37

ຈ. ການສິ້ນພະຊົນຂອງພະອົງເປັນສິ່ງທີ່ຜິດທຳມະຊາດ ເພາະພະອົງຊົງປັດສະຈາກບາບ (ໂຣມ 6:23) "ບໍ່ເຄີຍເຮັດບາບ (1 ເປໂຕ 1:22)" ຊົງປັດສະຈາກບາບ (1 ໂຢຮັນ 3:5) "ບໍ່ຊົງຮູ້ ຈັກ

GCI

ບາບ" ( 2ໂກຣິນໂທ 5:21) ດັ່ງນັ້ນ ກ່ອນທີ່ພະອົງຈະສິ້ນພະຊົນໄດ້ນັ້ນພະອົງຈຶ່ງ ຕ້ອງຖືກກະທຳໃຫ້ບາບ ເພື່ອເຫັນແກ່ເຮົາ

ສ. ການສິ້ນພະຊົນຂອງພະອົງນັ້ນ ເປັນສິ່ງທີ່ກຳໜົດໄວ້ລ່ວງໜ້າແລ້ວ ພະນິມິດ 13:8 ເປັນສິ່ງທີ່ຢູ່ໃນແຜນການຂອງພະເຈົ້າມາຕະຫລອດ

ຊ. ການສິ້ນພະຊົນຂອງພະອົງເປັນສິ່ງເໜືອທຳມະຊາດ

ໂຢຮັນ 10:17-18 "ເຮົາຍອມວາງຊີວິດລົງ ເພື່ອເຮົາຈະໄດ້ຮັບຊີວິດກັບຄືນມາອີກບໍ່ມີຜູ້ໃດຍາດຊີວິດໄປຈາກເຮົາໄດ້ ແຕ່ເຮົາຍອມສະຫລະຊີວິດນັ້ນດ້ວຍຕົວຂອງເຮົາເອງ ເຮົາມີສິດອຳນາດທີ່ຈະສະຫລະຊີວິດນັ້ນ ແລະມີສິດອຳນາດທີ່ຈະໄດ້ຮັບຊີວິດນັ້ນກັບຄືນມາອີກ" (ຈາກໜັງສືຄຳສອນພະອາຈານຂອງ ພໍເດີ ແບຣງຕັນ)

## XX. ການຄືນພະຊົນຊຶ່ງມີລັກສະນະພິເສດ

ຄຳສອນຂອງສາດສະໜາສ່ວນໃຫຍ່ໃນໂລກຕັ້ງຢູ່ເທິງພື້ນຖານຂອງປັດສະຍາ ແຕ່ຈາກສີ່ສາສະໜາໃຫຍ່ຂອງໂລກທີ່ມີພື້ນຖານຢູ່ທີ່ອົງສາດສະດາຂອງສາດສະໜານັ້ນມີພຽງສາດສະໜາຄຣິດເທົ່ານັ້ນທີ່ກ້າກ່າວວ່າ ອຸບມຸງຝັງສົບຂອງອົງສາດສະດານັ້ນວ່າງເປົ່າ.

ໃນບັນທຶກຄັ້ງເດີມຂອງພຸດທະສາດສະໜາ ບໍ່ເຄີຍມີການກ່າວອ້າງວ່າ ພະພຸດທະເຈົ້າ ໄດ້ເປັນຂຶ້ນມາຈາກຄວາມຕາຍ ສ່ວນທ່ານໂມຮາມັດສິ້ນຊີວິດໃນວັນທີ 8 ມິຖຸນາ ປີ 632 ເມື່ອອາຍຸໄດ້ 61 ປີ ຢູ່ເມືອງເມດິນາ ຊຶ່ງມຸດສະລິມທີ່ເຄັ່ງຄັດທົ່ວໂລກນັບພັນນັບໝື່ນໄດ້ເດີນທາງໄປຄາລະວະອຸມຸງຝັງສົບຂອງທ່ານເປັນປະຈຳທຸກປີ.
ອັບລາຮາມ ຜູ້ເປັນບິດາຂອງລັດທິຢິວ ສິ້ນຊີວິດໃນລາວປີ 1900 ກຄສ. ແຕ່ບໍ່ເຄີຍມີໃຜກ່າວອ້າງເຖິງການເປັນຂຶ້ນມາຈາກຄວາມຕາຍຂອງທ່ານເລີຍ.

ພະເຢຊູບໍ່ພຽງແຕ່ກ່າວພະຍາກອນທີ່ການເປັນຂຶ້ນມາຈາກຄວາມຕາຍຂອງພະອົງເທົ່ານັ້ນ ແຕ່ຍັງຊົງເນັ້ນຢ້ຳວ່າ ການທີ່ພະອົງເປັນຂຶ້ນມາຈາກຄວາມຕາຍຈະເປັນໝາຍສຳຄັນຢືນຢັນວ່າ ພະອົງຊົງເປັນພະເມຊີອາທີ່ແທ້ຈິງອີກ

ມັດທາຍ 12:38-40, 16:21,17:9,17:22-23, 20:18-19,26:32,27:63
ມາຣະໂກ 8:31,9:1,9:10,9:31,10:32-34, 14:28,58
ລູກາ 9:22-27
ໂຢຮັນ 2:18-22, 12:34 ແລະບົດທີ 14-16

ບໍ່ເຄີຍມີສາດສະດາຂອງສາດສະໜາໃດໆ ຫລືຜູ້ນຳກຸ່ມຊົນໃດນອກຈາກອົງພະເຢຊູທີ່ກ້າກ່າວວ່າ ພະອົງຈະຊົງເປັນຂຶ້ນມາຈາກຄວາມຕາຍພາຍຫລັງການວາຍພະຊົນຂອງພະອົງ ເພາະຖ້າພະອົງບໍ່ໄດ້

GCI

ເປັນຂຶ້ນມາຈາກຄວາມຕາຍແທ້ກໍຍ່ອມເປັນການທຳລາຍຄວາມໜ້າເຊື່ອຖືຂອງພະຣາຊະກິດຂອງພະອົງໄປໝົດສິ້ນ ພະເຢຊູໄດ້ປ່າວປະກາດໄວ້ຢ່າງກ້າຫານ ແລະໃນວັນທີ່ສາມກໍບັງເກີດຂຶ້ນຕາມນັ້ນແທ້ ດັ່ງນີ້ຄຣິສຕະສາດສະໜາຈຶ່ງຖືກຳເນີດຂຶ້ນມາ ແລະບໍ່ມີໃຜຢຸດຢັ້ງໄດ້ເພາະເຮົາທັງຫລາຍນະມັດສະການພະຜູ້ຊ່ອຍໃຫ້ພົ້ນຜູ້ຊົງເປັນຂຶ້ນມາຈາກຄວາມຕາຍ

"ພະອົງໄດ້ຊົງພິສູດໃຫ້ພວກເຂົາເຫັນດ້ວຍສະແດງຫລັກຖານອັນແນ່ນອນຫລາຍປະການ"
ກິດຈະການ 1:3

ກ. ພະຍານ

1. ຊົງປາກົດແກ່ມາລີ ມັກດາລາ ກ່ອນ — ໂຢຮັນ 20:11-18
2. ປາກົດຕົວແກ່ບັນດາສະຕຣີທີ່ເດີນທາງກັບຈາກອຸມງຝັງສົບ ມັດທາຍ 28:5-10
3. ຊົງປາກົດແກ່ເປໂຕ — ລູກາ 24:34
4. ແກ່ສາວົກຊຶ່ງເດີນທາງໄປບ້ານເອມາອູດ — ລູກາ 24:13-31
5. ບັນດາອັກຄະສາວົກ — ລູກາ 24:30-43
6. ບັນດາອັກຄະສາວົກ ແລະໂທມັດ — ໂຢຮັນ 20:24-29
7. ແກ່ສາວົກທັງເຈັດທີ່ທະເລທິເບລຽນ — ໂຢຮັນ 21:1-23
8. ແກ່ຄົນກວ່າຫ້າຮ້ອຍຄົນ — 1 ໂກຣິນໂທ 15:6
9. ແກ່ຢາໂກໂບ — 1 ໂກຣິນໂທ 15:7
10. ປາກົດແກ່ສາວົກສິບເອັດຄົນອີກເທື່ອນຶ່ງ — ມັດທາຍ 28:16-20
11. ສະເຕຟາໂນ ສາວົກຄົນທຳອິດທີ່ຕາຍເພື່ອຄວາມເຊື່ອ — ກິດຈະການ 7:55
12. ໂປໂລ ຂະນະກຳລັງເດີນທາງໄປດາມັດສະກັດ — ກິດຈະການ9:3-6, 1 ໂກຣິນໂທ 15:8

ບັນດາພະຍານເຫລົ່ານີ້ ສ່ວນໃຫຍ່ໄດ້ຕາຍເພື່ອຄວາມເຊື່ອ ເພາະເຂົາໄດ້ເທດສະໜາສັ່ງສອນເຖິງການທີ່ພະເຢຊູຄຣິດໄດ້ເປັນຂຶ້ນມາຈາກຄວາມຕາຍພວກເຂົາຍິນດີທີ່ຈະຕາຍເພື່ອຄວາມເຊື່ອຂອງຕົນ ເພື່ອເຫັນແກ່ພະຄຣິດຜູ້ຊົງພະຊົນຢູ່ ພວກເຂົາມີຫລັກຖານຢືນຢັນອັນໜັກແໜ້ນ ແລະບໍ່ມີວັນຫລົ້ມເຫລວ

ເມື່ອພະເຢຊູຊົງຖືກຈັບໃນສວນເຄດເຊມາເນນັ້ນ ບັນດາສາວົກຂອງພະອົງຕ່າງຖິ້ມພະອົງໄປຈົນໝົດສິ້ນ (ມັດທາຍ 26:56) ຈາກຊ່ວງເວລານີ້ໄປຈົນເຖິງເວລາທີ່ພະອົງເປັນຂຶ້ນມາຈາກຄວາມຕາຍພວກສາວົກຕ່າງມີຊີວິດຢູ່ດ້ວຍຄວາມຫວາດກວາ ພວກເຂົາບໍ່ເຊື່ອເລີຍວ່າພະອົງຈະເປັນຂຶ້ນມາຈາກຄວາມຕາຍອີກ (ໂຢຮັນ 20:9) ຖ້າພະເຢຊູບໍ່ໄດ້ເປັນຂຶ້ນມາຈາກຄວາມຕາຍແທ້ໆແລ້ວໄມ້ກາງແຂນກໍຄົງເປັນຈຸດຈົບຂອງສາດສະໜາຄຣິດ ພາຍຫລັງທີ່ພະເຢຊູຊົງສິ້ນພະຊົນໄປແລ້ວນັ້ນ ບັນດາສາວົກຂອງພະອົງຕ່າງຕົກຢູ່ພາຍໃຕ້ຄວາມຢ້ານທໍ້ແທ້ ແລະຮູ້ສຶກພ່າຍແພ້ສິ້ນຫວັງ ການສິ້ນພະຊົນຂອງພະເຢຊູມີຄວາມໝາຍຕໍ່ພວກເຂົາພຽງຢ່າງດຽວ

GCI

ເທົ່ານັ້ນ ກໍຄື ຈຸດຈົບຂອງທຸກສິ່ງ ອັນໃດຄືສາເຫດຂອງການປ່ຽນແປງຄັ້ງໃຫຍ່ທີ່ເກີດຂຶ້ນກັບຊີວິດຂອງພວກເຂົາ ພາຍໃນເວລາສາມວັນ ແລະສາມຄືນຕໍ່ມາ? ຄຳອະທິບາຍທີ່ສົມເຫດຜົນພຽງປະການດຽວເທົ່ານັ້ນກໍຄື ພວກເຂົາມີຫລັກຖານທີ່ໜັກແໜ້ນ ແລະບໍ່ມີວັນຫລົ້ມເຫລວ ຊຶ່ງພິສູດຢືນຢັນໄດ້ວ່າພະອົງໄດ້ຊົງເປັນຂຶ້ນມາຈາກຄວາມຕາຍແລ້ວ ແລະຍັງຊົງພະຊົນຢູ່ຕະຫລອດໄປເປັນນິດ ພວກເຂົາໄດ້ເຫັນພະອົງໄດ້ສົນທະນາກັບພະອົງໄດ້ສຳພັດ ແລະໄດ້ກິນດື່ມຮ່ວມກັບພະອົງ

ຄ. ຫລັກຖານແວດລ້ອມ

1. ການປ່ຽນແປງທີ່ເກີດຂຶ້ນໃນຊີວິດຂອງບັນດາສາວົກ ພາຍຫລັງຈາກທີ່ພະອົງຊົງເປັນຂຶ້ນມາຈາກຄວາມຕາຍ ຈາກຄວາມຢ້ານ ປ່ຽນເປັນຄວາມກ້າຫານຢ່າງບໍ່ມີຂີດຈຳກັດ ພວກເຂົາຊື່ນຊົມຍິນດີທີ່ຕ້ອງພົບການຂົ່ມເຫັງ (ກິດຈະການ 5:40-42) ພວກເຂົາເລືອກເອົາຄວາມຕາຍ ເພາະຄວາມເຊື່ອໃນພະອົງຜູ້ເປັນຂຶ້ນມາຈາກຕາຍ ແທນທີ່ຈະຍອມປະຕິເສດຄວາມເຊື່ອໃນພະອົງ ເພື່ອແລກກັບການປົດປ່ອຍ (ເຮັບເຣີ 11:35)

2. ຄຣິສຕະຈັກຍຸກແລກໄດ້ເລີ້ມປະຊຸມນະມັດສະການໃນວັນຕົ້ນອາທິດ ຊຶ່ງເປັນວັນທີ່ພະເຢຊູເປັນຂຶ້ນມາຈາກຄວາມຕາຍ ທັງນີ້ບໍ່ແມ່ນການປະຕິບັດຕາມບົດບັນຍັດ ແຕ່ເປັນການຕອບສະໜອງຕໍ່ເຫດການຊຶ່ງເກີດຂຶ້ນໃນເວລານັ້ນ (ກິດຈະການ 20:7) ສຳລັບຄຣິສຕຽນແລ້ວ ວັນອາທິດທຸກວັນ ຄືວັນອິດສະເຕີ

3. ຄຣິສຕຽນໃນຍຸກທຳອິດ ອອກໄປປ່າວປະກາດໃນທຸກຫົນທຸກແຫ່ງ ເຖິງການເປັນຂຶ້ນມາຈາກຄວາມຕາຍຂອງພະເຢຊູ (ກິດຈະການ8)

4. ອຸມງທີ່ວ່າງເປົ່າ ທະຫານຍາມໂທມັດໄດ້ຮັບຄ່າຈ້າງໃຫ້ເວົ້າວ່າ "ສາວົກຂອງພະອົງໄດ້ແອບຢ່ອງມາລັກພະສົບພະອົງໄປໃນເວລາກາງຄືນໃນຂະນະທີ່ພວກເຮົາງຽບຫລັບໄປ" (ມັດທາຍ 28:12-13)

ປະການທຳອິດ ພວກສາວົກໃນຂະນະນັ້ນຂາດຄວາມກ້າ ຖ້າພວກເຂົາລັກເອົາພະສົບໄປແທ້ ແລ້ວອັນໃດທີ່ເຮັດໃຫ້ພວກເຂົາຍອມທົນທຸກທໍລະມານ ແລະຍອມຕາຍເພື່ອຄວາມເຊື່ອໄດ້ ໃນເວລາຕໍ່ມາເມື່ອຕ້ອງປະເຊີນໜ້າກັບຄວາມຕາຍ ຕ້ອງມີໃຜຈັກຄົນທີ່ຍອມເປີດເຜີຍບ່ອນທີ່ເຊື່ອງພະສົບທີ່ພວກເຂົາລັກໄປນັ້ນ ເພື່ອແລກກັບຊີວິດຂອງຕົນເອງ

ປະການທີ່ສອງ ບໍ່ມີໃຜເລີຍທີ່ຖືກຈັບ ແລະຖືກສອບສວນໃນຂໍ້ຫາລັກພະສົບພະເຢຊູເປັນທີ່ແນ່ໃຈວ່າ ບໍ່ມີເຈົ້າໜ້າທີ່ບ້ານເມືອງຄົນໃດເຊື່ອເລື່ອງທີ່ພວກທະຫານເລົ່າ.

GCI

ປະການທີ່ສາມ ທະຫານຍາມອາດຖືກລົງໂທດເຖິງຂັ້ນປະຫານຊີວິດ ເພາະນອນຫລັບໃນຂະນະເຂົ້າເວນຍາມ

ປະການທີ່ສີ່ ຖ້າທະຫານນອນຫລັບຍາມແທ້ໆ ພວກເຂົາຮູ້ໄດ້ຢ່າງໃດ ວ່າສາວົກເປັນຜູ້ລັກຂະໂມຍພະສົບໄປ?

ປະການທີ່ຫ້າ ຖ້າພວກສັດຕູຂອງພະອົງລັກຂະໂມຍພະສົບໄປ ພວກເຂົາກໍຄົງນຳອອກມາເປີດເຜີຍເພື່ອລົບລ້າງຄວາມເຊື່ອຂອງຄຣິສຕະຊົນໄປແລ້ວ

5. ຜ້າພັນພະສົບທີ່ພົບໃນອຸມງວ່າງເປົ່າ ນັ້ນຄືຫລັກຖານສຳຄັນທີ່ພິສູດການເປັນຂຶ້ນມາຈາກຄວາມຕາຍ (ໂຢຮັນ 10:1-10) ຖ້າສະຫາຍຂອງພະອົງ ຫລືແມ່ນກະທັ້ງກຸ່ມຄົນທີ່ເປັນສັດຕູແອບລັກພະສົບໄປ ພວກເຂົາກໍຄົງບໍ່ເອົາຜ້າພັນພະກາຍອອກເພາະພະອົງສິ້ນພະຊົນມາເປັນເວລາສາມວັນແລ້ວ ເມື່ອໂຢຮັນເຫັນຜ້າພັນພະສົບຖືກພັບໄວ້ຄືເກົ່າທຸກປະການ ທ່ານກໍຮູ້ວ່າ ໄດ້ເກີດການອັດສະຈັນຂຶ້ນແລ້ວພະເຢຊູສະເດັດອອກມາຈາກຜ້າແລະຖິ້ມຜ້າໃຫ້ກອງໄວ້ຢ່າງເດີມໂດຍບໍ່ເສຍຮູບມັນຈຶ່ງເປັນຫລັກຖານອັນແນ່ນອນ ໃນອຸບມຸງວ່າງເປົ່າເມື່ອໂຢຮັນໄດ້ເຫັນ ແລະເຂົ້າໃຈແລ້ວທ່ານຈຶ່ງເຊື່ອວ່າ ພະເຢຊູໄດ້ເປັນຂຶ້ນມາຈາກຄວາມຕາຍແລ້ວ (ຈາກໜັງສືຄຳສອນຂອງພະອາຈານໂດຍພໍເຕີ ແບຣິງຕັນ)

ໆ. ສະຫລຸບ

ພະເຢຊູຄຣິດ "ຮັບການປະກາດເປັນພະບຸດຂອງພະເຈົ້າ ໂດຍລິດເດດແຫ່ງການເປັນຂຶ້ນມາຈາກຄວາມຕາຍ" **ໂລມ 1:4**

ນີ້ຄືບັນທຶກ

| | |
|---|---|
| ຫລຸມຝັງສົບຂອງຂົງຈື້ | - ມີສົບຝັງຢູ່ |
| ຫລຸມຝັງສົບພະພຸດທະເຈົ້າ | - ມີສົບຝັງຢູ່ |
| ຫລຸມຝັງສົບຂອງໂມຫາມັດ | - ມີສົບຝັງຢູ່ |
| ອຸມງຝັງພະເຢຊູ | - ວ່າງເປົ່າ |

ເປັນໜ້າທີ່ຂອງທ່ານທີ່ຕ້ອງຕັດສິນໃຈແຕ່ຫລັກຖານໄດ້ຢືນຢັນຄວາມຈິງຂໍ້ນີ້ຢ່າງຊັດເຈນແລ້ວ

ຫລັກຖານກ່າວໄວ້ຢ່າງຊັດແຈ້ງວ່າ ພະຄຣິດໄດ້ເປັນຂຶ້ນມາຈາກຄວາມຕາຍແລ້ວ

ພະອົງແຕກຕ່າງບໍ່ຄືໃຜ ເປັນພຽງຜູ້ດຽວເທົ່ານັ້ນຊົງແຕກຕ່າງຈາກຄົນທັງປວງ ແລະບໍ່ມີໃຜ ຄືພະອົງ

## XXI. ຊີວິດທີ່ເຮັດໃຫ້ຄຳພະຍາກອນສຳເລັດເປັນຈິງ

GCI

ອັກຄະສາວົກໃນພະທຳກິດຈະການ ໄດ້ກ່າວອ້າງເຖິງຫລັກຖານສອງດ້ານໃນຊີວິດຂອງພະເຢຊູຊາວນາຊາເລັດເພື່ອພິສູດເຖິງຄວາມເປັນພະເມຊີອາຂອງພະອົງ

1. ການເປັນຂຶ້ນມາຈາກຄວາມຕາຍ

2. ການເຮັດໃຫ້ສຳເລັດຕາມຄຳພະຍາກອນທີ່ກ່າວເຖິງພະເມຊີອາ ພະຄຳພີພະສັນຍາເດີມ ຊຶ່ງຖືກຂຽນຂຶ້ນໂດຍໃຊ້ເວລາຫລາຍກວ່າໜຶ່ງພັນປີ ໄດ້ກ່າວເຖິງພະເມຊີອາຜູ້ຈະສະເດັດມາໄວ ກວ່າ 300 ຄັ້ງ ແລະທຸກຂໍ້ຄວາມສຳເລັດເປັນຈິງແລ້ວໃນຊີວິດຂອງພະເຢຊູຄຣິດ ນັ້ນເປັນຫລັກຖານອັນໝຽວແໜ້ນທີ່ຢືນຢັນເຖິງຄວາມເປັນພະເມຊີອາຂອງອົງພະເຢຊູຄຣິດ

ກ. ຈຸດປະສົງຂອງຄຳພະຍາກອນເຖິງພະເມຊີອາ

1. ພະອົງຊົງເປັນພະເຈົ້າທ່ຽງແທ້ອົງດຽວ ຊຶ່ງຄວາມຮອບຮູ້ຂອງພະອົງບໍ່ມີຈຳກັດ ແລະພະວັດຈະນະຂອງພະອົງກໍບໍ່ເຄີຍຜິດພາດຫລົ້ມເຫລວ ຈົດເຊັນບັນຊີ 23:19
2. ທຸກສັບພະສິ່ງຢູ່ພາຍໃຕ້ນ້ຳພະໄທຂອງພະເຈົ້າ ເອຊາຢາ 46:9-10
3. ພະເມຊີອາ ຈະເປັນທີ່ຮູ້ຈັກຢ່າງທົ່ວເຖິງ ເພາະເຫດຄຸນສົມບັດຂອງພະອົງ ເອຊາຢາ 48:3,5 ໂຣມ 1:2-4

ຂ. ຄວາມສຳຄັນຂອງຄຳພະຍາກອນທີ່ທຳນວຍເຫດການລ່ວງໜ້າ

1. ເປັນຂໍ້ສະຫລຸບວ່າ ມີພະປັນຍາຂອງພະເຈົ້າຢູ່ເບື້ອງຫລັງຂໍ້ຂຽນຂອງພະຄຳພີ
2. ຢືນຢັນເຖິງຂໍ້ບໍ່ຈິງເລື່ອງພະເຈົ້າ
3. ຢືນຢັນວ່າ ພະເຢຊູຊາວນາຊາເລັດເປັນພະເຈົ້າ
4. ສະແດງໃຫ້ເຫັນວ່າ ພະຄຳພີເກີດຈາກການດົນໃຈຂອງພະເຈົ້າ
5. ຢືນຢັນໃຫ້ຮູ້ວ່າ ພະເຢຊູເປັນພະເມຊີອາ ພະບຸດຂອງພະເຈົ້າ

ຄ. ຂໍ້ໂຕ້ແຍ້ງ

1. ພະເຢຊູຈົງໃຈສ້າງເຫດການຕ່າງໆ ຂຶ້ນ ເພື່ອໃຫ້ເປັນໄປຕາມພະຄຳພີທີ່ພະຍາກອນໄວ້

ຄຳຕອບ: ຄຳພະຍາກອນກ່ຽວກັບພະເມຊີອາ ຫລາຍປະການ ເປັນສິ່ງທີ່ຢູ່ນອກເໜືອວິໄສ (ຄວາມສາມາດ) ຂອງພະເຢຊູທີ່ຈະຄວບຄຸມໄດ້ ໃນຖານະທີ່ຊົງເປັນມະນຸດ ເຊັ່ນ:

ກ) ສະຖານທີ່ບັງເກີດ ມີຄາ 5:2

GCI

ຂ) ເວລາກຳເນີດ ດານຽນ 9:25, ປະຖົມມະການ 49:10

ຄ) ລັກສະນະຂອງການກຳເນີດ ເອຊາຢາ 7:14

ງ) ການທໍລະຍົດ ເພງສັນລະເສີນ 41:9, 55:12-14

ຈ) ຄ່າຈ້າງໃນການທໍລະຍົດ ເສຄາຣິຢາ 11:12

ສ) ລັກສະນະຂອງການຕາຍໂດຍຖືກແທງ ເພງສັນລະເສີນ 22:16; ເສຄາຣິຢາ 12:10

ຊ) ປະຕິກິລິຍາຂອງປະຊາຊົນ(ການເຍີ້ຍຫຍັນ, ຖົ່ມນໍ້າລາຍລົດ, ການຈ້ອງເບິ່ງ,.) ເອຊາຢາ 50:6; ເພງສັນລະເສີນ 22:7-8

ຍ) ການຖືກຝັງ ເອຊາຢາ 53:9; ມັດທາຍ 27:57-60

2. ການສຳເລັດຕາມຄຳພະຍາກອນ ເປັນພຽງເລື່ອງບັງເອີນ

ຄຳຕອບ: ແມ່ນ ທີ່ຄຳພະຍາກອນອາດບັງເອີນເປັນຈິງໃນຊີວິດມະນຸດເຮົາໄດ້ຈັກ 2-3 ເລື່ອງ ແຕ່ບໍ່ມີທາງທີ່ຈະເກີດຂຶ້ນໄດ້ພ້ອມໆກັນໃນເລື່ອງໃຫຍ່ໄດ້ເຖິງ 61 ຂໍ້

ທ່ານ ປີເຕີ ສະໂຕນເນີ ໄດ້ກ່າວໄວ້ໃນໜັງສື "ວິທະຍາສາດ" ເວົ້າວ່າ ຄວາມເປັນໄປໄດ້ຕາມຫລັກວິທະຍາສາດສະໄຫມໃຫມ່ ທີ່ຄຳພະຍາກອນ 8 ຂໍ້ທີ່ຈະເກີດຂຶ້ນໄດ້ຈິງນັ້ນ ມີພຽງແຕ່ 1 ໃນ 100,000,000,000,000,000,000 ເທົ່ານັ້ນ

"ຖ້າຄຳພະຍາກອນເຫລົ່ານີ້ບໍ່ໄດ້ເກີດມາຈາກການດົນໃຈຂອງພະເຈົ້າແລ້ວ ມັນກໍຈະເກີດມາຈາກຜູ້ເຜີຍພະວັດຈະນະເຫລົ່ານີ້ ທີ່ຂຽນຂຶ້ນມາຕາມທີ່ເຂົາຄິດເອົາເອງ ຊຶ່ງໂອກາດທີ່ຈະເກີດຂຶ້ນແທ້ໃນຊີວິດຂອງໃຜຄົນໃດຄົນໜຶ່ງກໍຈະມີພຽງແຕ່ 1 ໃນ 100,000,000,000,000,000,000 ເທົ່ານັ້ນ ແຕ່ ທັງໝົດນີ້ໄດ້ເກີດຂຶ້ນແລ້ວໃນຊີວິດຂອງພະເຢຊູຄຣິດ"

ຂໍ້ສະຫລຸບ ນີ້ໝາຍຄວາມວ່າ ການສຳເລັດເປັນຈິງຂອງຄຳພະຍາກອນທັງແປດຂໍ້ນີ້ເປັນ ຂໍ້ພິສູດວ່າ ພະເຈົ້າເປັນຜູ້ດົນໃຈໃຫ້ຂຽນພະຄຳພີຂຶ້ນ

ພະອົງແຕກຕ່າງ ບໍ່ຄືໃຜ ເປັນພຽງຜູ້ດຽວເທົ່ານັ້ນ
ຊົງແຕກຕ່າງຈາກຄົນທັງປວງ ແລະບໍ່ມີໃຜ ທຽບເທົ່າພະອົງ

GCI

# XXII. ຊີວິດ ແລະພະຣາຊະກິດໃນໂລກຍັງບໍ່ສຳເລັດເສັດສິ້ນ - ພະອົງຈະສະເດັດກັບມາອີກ

ກ. ຄຳປ່າວປະກາດ

ພາຍຫລັງການເປັນຂຶ້ນມາຈາກຄວາມຕາຍ ພະເຢຊູໄດ້ຊົງໃຊ້ເວລາຢູ່ຮ່ວມເຫລົ່າສາວົກເປັນໄລຍະ ເວລາ 40 ວັນເພື່ອຊົງສັ່ງສອນພວກເຂົາເຖິງເລື່ອງແຜ່ນດິນຂອງພະເຈົ້າ "ເມື່ອພະອົງກ່າວເຊັ່ນນັ້ນແລ້ວ ພະເຈົ້າຊົງຮັບພະອົງຂຶ້ນໄປຕໍ່ໜ້າຕໍ່ຕາເຂົາ ແລະມີເມກຄຸມພະອົງໃຫ້ພົ້ນສາຍຕາຂອງເຂົາເມື່ອເຂົາກຳລັງແຫງນເບິ່ງຟ້າເວລາທີ່ພະອົງສະເດັດຂຶ້ນໄປນັ້ນ ມີສອງຄົນສວມເສື້ອຂາວມາຢືນຢູ່ຂ້າງໆເຂົາສອງຄົນນັ້ນກ່າວວ່າ "ຊາວຄາລີເລເອີຍ ເຫດສັນໃດທ່ານຈຶ່ງແຫງນເບິ່ງຟ້າສະຫວັນ ພະເຢຊູອົງນີ້ຊຶ່ງຊົງຮັບໄປຈາກທ່ານຂຶ້ນໄປຍັງສະຫວັນນັ້ນຈະສະເດັດມາອີກ ຄືຢ່າງທີ່ທ່ານທັງ ຫລາຍໄດ້ເຫັນພະອົງສະເດັດໄປຍັງສະຫວັນນັ້ນ" ກິດຈະການ 1:9-11

ໃນເມື່ອພະເຢຊູໄດ້ຊົງເຮັດໃຫ້ຄຳພະຍາກອນສຳເລັດເປັນຈິງໄປແລ້ວກວ່າ 300 ຂໍ້ໃນການສະເດັດມາຄັ້ງທຳອິດຂອງພະອົງ ເຮົາກໍຍ່ອມເຊື່ອໝັ້ນໄດ້ວ່າ ຄຳພະຍາກອນກ່ຽວກັບການສະເດັດມາຄັ້ງທີ່ສອງຂອງພະອົງຈະສຳເລັດເປັນຈິງຄົບຖ້ວນທຸກປະການ

ຂ. ຄຳສອນ ແລະຈຸດປະສົງໃນການສະເດັດມາຄັ້ງທີ່ສອງຂອງພະອົງ

1. ພະອົງຈະສະເດັດມາຮັບຄຣິສຕະຈັກຂອງພະອົງ ໄປຢູ່ກັບພະອົງ 1ເທຊະໂລນິກາ 4:16-17
2. ພະອົງຈະສະເດັດມາພິພາກສາບັນດາປະຊາຊາດ ມັດທາຍ 25:31-40
3. ພະອົງຈະສະເດັດມາເພື່ອຊ່ວຍອິດສະລາເອນໃຫ້ພົ້ນ ໂຣມ 11:25-26
4. ພະອົງຈະສະເດັດມາເພື່ອສະຖາປະນາບັນລັງຂອງດາວິດ ລູກາ 1:31-33 ແລະ ເອຊາຢາ 9:6-7
5. ພະອົງຈະສະເດັດມາເພື່ອນຳການປົກຄອງທີ່ຊອບທຳມາສູ່ໂລກ ເຮັບເຣີ 1:8

ພະເຢຊູຄຣິດຈະສະເດັດກັບມາໃນໂລກນີ້ອີກຄັ້ງໜຶ່ງ

"ພະອົງຜູ້ຊົງເປັນພະຍານສຳລັບສິ່ງເຫລົ່ານີ້ກ່າວວ່າ "ເຮົາຈະກັບມາໃນໄວໆນີ້" ອາແມນ ອົງພະຜູ້ເປັນເຈົ້າ ເຊີນສະເດັດມາເຖີດ" ພະນິມິດ 22:20

GCI

# XXIII.ບົດສະຫລຸບ

ຈາກບົດຮຽນນີ້ເຮົາໄດ້ເຫັນແລ້ວວ່າຊີວິດແລະຄຳສອນຂອງພະເຢຊູຄຣິດນັ້ນ ມີຄຸນລັກສະນະພິເສດແຕກ ຕ່າງຈາກມະນຸດຄົນອື່ນໃດທັ້ງສິ້ນ

ກ. ພະວັດຈະນະຂອງພະອົງ ຄືຖ້ອຍຄຳຍິ່ງໃຫຍ່ທີ່ສຸດ ເທົ່າທີ່ຄົນເຄີຍກ່າວມາ

1. ລູກາ 21:33 ຟ້າສະຫວັນ ແລະແຜ່ນດິນຈະລ່ວງໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ສູນໄປ
2. ລູກາ4:32 ນາຍແພດລູກາ ບອກເຮົາໄວ້ວ່າ "ພວກເຂົາພາກັນປະຫລາດໃຈໃນຄຳສັ່ງສອນຂອງພະອົງ ເພາະພະອົງຊົງສັ່ງສອນເຂົາດ້ວຍລິດອຳນາດ"
3. ໂຢຮັນ 7:46 ພວກເຈົ້າໜ້າທີ່ຈຶ່ງກ່າວວ່າ ເຮົາບໍ່ເຄີຍເຫັນໃຜກ່າວຖ້ອຍຄຳເໝືອນຢ່າງຄົນນີ້ໄດ້ກ່າວ

ຂ. ຄຳພະຍານຈາກຜູ້ອື່ນເຖິງຄວາມມີເອກກະລັກສະເພາະຕົວຂອງພະອົງ

1. ຄຳພີໂບຮານ ໄດ້ກ່າວເຖິງພະເຢຊູໄວ້ວ່າ "ຜູ້ຍິ່ງໃຫຍ່ທີ່ສຸດໃນໂລກນີ້ ແລະໃນໂລກທີ່ຈະມີມາໃນພາຍໜ້າ"
2. ນະໂປລຽນ ໂບນາປາຕ "ເຮົາຮູ້ຈັກຄົນ ແລະເຮົາບອກເຈົ້າທັງຫລາຍໄດ້ວ່າ ພະເຢຊູຄຣິດບໍ່ແມ່ນ ຄົນທຳມະດາລະຫວ່າງພະອົງກັບມະນຸດໃດໆໃນໂລກນີ້ ນັ້ນບໍ່ມີອັນໃດປຽບທຽບກັນໄດ້ອະເລັກຊັນເດີ, ຊີຊາ, ຊາເລີມັງ ແລະເຮົາເອງໄດ້ກໍ່ສ້າງອານາຈັກຂຶ້ນມາ ແຕ່ຄວາມສະຫລຽວສະຫລາດຂອງເຮົາຕັ້ງຢູ່ເທິງຮາກຖານອັນໃດ? ການໃຊ້ກຳລັງບັງຄັບແຕ່ພະເຢຊູຄຣິດ ສະຖາປະນາຣາຊອານາຈັກຂອງພະອົງເທິງຄວາມຮັກໃນຊົ່ວໂມງນີ້ມີຄົນນັບລ້ານທີ່ພ້ອມຈະຍອມຕາຍເພື່ອພະອົງ"

ຄ. ອິດທິພົນຂອງພະອົງຍັ້ງຢືນ ແລະແຜ່ຂະຫຍາຍໄປທົ່ວສາກົນພິພົບ

1. ນັກປະຫວັດສາດຜູ້ຍິ່ງໃຫຍ່ ເດນເນທ ສະກອດ ລາເຕີ ກ່າວໄວ້ວ່າ "ເມື່ອວັນເວລາຜ່ານໄປ ຫລາຍສັດຕະຫວັດ ຈາກຜົນກະທົບທີ່ຊີວິດຂອງພະອົງມີຕໍ່ປະຫວັດສາດ

   ຫລັກຖານຕ່າງໆ ຕ່າງບົ່ງຊີ້ໃຫ້ເຮົາເຫັນວ່າ ພະເຢຊູຄຣິດ ຄື ບຸກຄົນທີ່ມີຊີວິດຊົງອິດທິພົນທີ່ສຸດເທົ່າທີ່ເຄີຍດຳເນີນຢູ່ໃນໂລກນີ້ ແລະອິດທິພົນຂອງພະອົງເພີ່ມພູນຍິ່ງໆຂຶ້ນໄປຢູ່ສະເໝີ"

2. ຈີໂຫມັດ "ພະອົງຊົງເປັນພະລັງອິດທິພົນອັນຍິ່ງໃຫຍ່ໃນໂລກຂອງເຮົາທຸກວັນນີ້ດັ່ງທີ່ໃຜເຄີຍກ່າວໄວ້ຢ່າງໜ້າຟັງວ່າ ຂ່າວປະເສີດເຫລັ້ມທີ່ຫ້າກຳລັງຖືກບັນທຶກຢູ່ນັ້ນຄື

GCI

ເລື່ອງລາວຊີວິດຂອງພະເຢຊູຄຣິດໃນຊີວິດ ແລະດວງໃຈຂອງຜູ້ຄົນ ແລະປະຊາຊາດທັງຫລາຍ”

**ເອກກະສານອ້າງອີງ:**


1. McDowell, Josh. Euidence That Demands A Verdict. Singapore: Here’s Life Publishers,Inc
2. Barrington,Porter. Master Outines and Notes, Nashville: Thomas Nelson, Inc.Publishers